# ແຜນກູ້ພັຍໄພລາມປ່າເກາະມາວອິ

## ການນັບຖືຮີດຄອງວັທນະທັມທ້ອງຖິ່ນ

**ເດືອນກັນຍາ 1, 2023**

*ເກາະມາວອິໄດ້ຕອບສນອງແກ່ຊາວໂລກຢ່າງຫຼວງຫຼາຍ. ໃນນາມແຂກຢ້ຽມຢາມ, ຖືເປັນກຽດໃຫ້ການອູ້ມຊູເປັນການຕອບແທນ.*

*ກົມສະຫງວນປ້ອງກັນສິ່ງແວດລ້ອມ ສະຫາຣັດອາເມຣິກາ (EPA) ໄດ້ຖືກມອບໝາຍຈາກກະຊວງ ຮັບຜິດ ຊອບການກູ້ພັຍ ສ້ອມແຊມຍາມພາວະສຸກເສີນ (FEMA) ເພື່ອສຳລວດ, ກວດລ້າງ, ເກັບມ້ຽນ ສານພິດເຄມີອອກໜີຈາກ ເຂດຄຸ້ມບ້ານທີ່ໄດ້ຖືກຜົນເສັຽຫາຍທຳລາຍຈາກ ໄພລາມປ່າ ໃນເຂດເມືອງ* ລາຮາຍນາ Lāhainā, ຄູລາ Kula, ແລະ ໂອລິນດາ Olinda ຂອງເກາະມາວອິ Maui.

EPA ຮັບຮູ້ວ່າເຂົາທຳໜ້າທີ່ບໍຣິຫານວຽກພາຍໃນຂົງເຂດ ວັທນະທັມສຳຄັນແຫ່ງກຳເນີດຂອງ ຊາວເກາະ ຮາວາຍອິ, ຄົນທ້ອງຖິ່ນ ຂອງຣັດຮາວາຍອິ ຮວມທັງແຜ່າຊາດອື່ນໆຈາກທຸກມຸມໂລກ.



*ພາບຄະນະຊຸມຊົນເມືອງມາວອິແລະຜູ້ຕິດຕາມກວດກາທາງວັທນະທັມທີ່ໄດ້ຮັບການຝຶກອົບຮົມດ້ານສິ່ງອັນຕະຣາຍແລະຄວາມປອດໄພໃນໜ້າທີ່ວຽກ.*

(ເຊີນເບິ່ງຂໍ້ມູນຕື່ມອີກ ທາງດ້ານຫລັງ)

**ມີນັກຊ່ຽວຊານທາງດ້ານວັທນະທັມຕິດຕາມຮ່ວມໃນຄະນະ EPA**

- ທາງການEPA ໄດ້ຝຶກຊ້ອມຄົນທ້ອງຖິ່ນ ເກາະມາວອີ ໃນວິຊາສູກຂະອະນາໄມແລະການລະວັງພັຍອັນຕະຣາຍ ເພື່ອຮ່ວມງານໃນນາມຜູ້ຕິດຕາມກວດເບິ່ງຕາມແນວ ທາງວັທນະທັມ.
- ການຝຶກອົບໂລມຄົນເລົ່ານີ້ ເພື່ອໃຫ້ປະຈໍາໜ້າທີ່ໃນເຂດ ບໍຣິຫານວຽກຂອງEPA ຕໍ່ການຊໍາລະກວດລ້າງເສດສານ ພິດຕ່າງໆ.
- ນັກຊ່ຽວຊານດ້ານວັທນະທັມ ຈະວິເຄາະສະພາວະແລະສະຖານທີ່ອັນເປັນສັກສິດ ທາງວັທນະທັມ ພ້ອມທັງວັດຖຸ, ປະຕິບັດຕາມແນວທາງຂອງເຜົ່າ, ແລະນໍາພາພະນັກງານ EPA ຕາມໜ້າທີ່ວຽກໃນທ້ອງສນາມ.

**ການຝຶກອົບລົມທາງປະວັດສາດແລະວັທນະທັມແກ່ພະນັກງານຫ້ອງການແລະທີມງານໃນສນາມ**

- ຄະນະກົມກອງສະໜວນສິ່ງແວດລ້ອມໃນສນາມແລະໃນຫ້ອງການໄດ້ຮັບການຝຶກອົບລົມດ້ານວັທນະທັມທ້ອງຖິ່ນຈາກຄູສອນປະຈໍາເຂດເມືອງມາວອີ.
- ການຝຶກອົບລົມຈະຊ່ອຍພະນັກງານກົມສິ່ງແວດລ້ອມເຂົ້າໃຈວັທນະທັມທ້ອງຖິ່ນ ຮາວາຍອີ ແລະຜົນເສັຽຫາຍອັນມະຫາສານຈາກອັກຄີໄພ.
- ພະນັກງານຈະນໍາໃຊ້ການຮຽນຮູ້ໃນໜ້າທີ່ວຽກໃຫ້ຖືກຕ້ອງຕາມແນວທາງຂອງການສະແດງຄວາມເຄົາຣົບນັບຖືຕໍ່ວັທນະທັມທ້ອງຖິ່ນ.

**ແຈ້ງການເພື່ອຍັ້ງຍືນຜົນງານໂດຍການພົວພັນຕິດຕໍ່ກັບຜູ້ນໍາທ້ອງຖິ່ນ**

- ແນວທາງທີ່ກົມສງວນສິ່ງແວດລ້ອມໄດ້ປະຕິບັດໃນການລົງສນາມແລະພົວພັນກັບຜູ້ນໍາທ້ອງຖິ່ນ ເພື່ອໃຫ້ຄວາມໝັ້ນໃຈໃນການຮັກສາສິ່ງສັກສິດແລະໃຫ້ຄວາມເຄົາຣົບຕໍ່ວັທນະທັມແລະປະວັດສາດຂອງຄົນ ຮາວາຍອີ.

**ຖ້າຕ້ອງການຢາກຮູ້ຕື່ມກ່ຽວກັບ EPA ເຊີນຕິດຕໍ່ຊອກຫາໄດ້ທີ່:**

Email: [R9Wildfiresinfo@epa.gov](mailto:R9Wildfiresinfo@epa.gov)

Phone: **(808) 539-0555**

Or visit: [epa.gov/maui-wildfires](https://epa.gov/maui-wildfires)

[facebook.com/EPAregion9](https://facebook.com/EPAregion9)

[twitter.com/EPAregion9](https://twitter.com/EPAregion9)

[instagram.com/epagov](https://instagram.com/epagov)

ຫຼື

[mauicounty.gov](https://mauicounty.gov) and [mauirecovers.org](https://mauirecovers.org)